## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 12 ພຶສພາ 2024 (05-12-2024)

## ການຮັບໃຊ້ໃນພຣະຄຣິດ

**ຈຸດສຳຄັນໃນບົດຮຽນ**: ເຮົາຕ້ອງຮັບໃຊ້ຊຶ່ງກັນແລະກັນແລະຢູ່ຄຽງຂ້າງກັນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ວົງຊິມໂຟນີອໍແຈັສຕຣາອາດມີນັກດົນຕຣີເຖິງ 100 ຄົນຂຶ້ນໄປຫຼິ້ນເຄື່ອງດົນຕຣີສີ່ປະເພດ. ໝວດເຄື່ອງສາຍປະກອບດ້ວຍໄວໂອລິນ, ໄວໂອລາ, ແຊວໂລ, ດັບໂບ້ເບສ, ແລະຮາບ. ປະເພດໄມ້ເປົ່າລວມມີ ຄູ່ຍ, ພິກໂກໂລ, ຄແລຣິເນັດ, ໂອໂບ, ແລະບາສຊູນ. ພາກສ່ວນທອງເຫຼືອງມີ ແກ, ທູບາ, ແຄນຝຣັ່ງ, ແລະທຣັມໂບນ. ແລະເຄື່ອງເພີຄັສຊັນປະກອບດ້ວຍກອງຕ່າງໆ, ແທັມບູຣິນ,ຈິມສ໌, ຊີໂລຊາຍໂລໂຟນ, ເປັງໂນແລະອື່ນໆອີກ. ສິ່ງທີ່ເຮັດໃຫ້ອໍແຈັສຕຣາກາຍເປັນ ຊິມໂຟນີອໍແຈັສຕຣາແມ່ນຂນາດຂອງມັນ. ວົງຊິມໂຟນີອໍແຈັສຕຣາໃຫຍ່ພໍທີ່ຈະຫຼິ້ນວົງຊິມໂຟນີ-ເປັນຜົນງາອລສສິກທີ່ສຳຄັນຊຶ່ງຕ້ອງໃຊ້ເຄື່ອງດົນຕຣີທີ່ແຕກຕ່າງກັນແຕ່ສິບແປດຫາຊາວຫ້າຊິ້ນ. ພາສາອັງກິດຄຳວ່າ, “symphony” ມາຈາກພາສາກຣີກ, “syn” ມີຄວາມໝາຍວ່າ “ນຳກັນ” ແລະ“phone” ມີຄວາມໝາຍວ່າ “ສຽງເວົ້າຫຼືສຽງດົນຕຣີ.” ແທ້ຈິງແລ້ວ, “symphony” ໝາຍຄວາມວ່າ "ຫຼິ້ນນຳກັນ.” ນັກປະພັນເພງຜູ້ຍິ່ງໃຫຍ່ຮູ້ວິທີປະສົມປະສານເຄື່ອງດົນຕຣີຫຼາຍຊນິດຢ່າງຊ່ຽວຊານ. ເຂົາໃຊ້ເຄື່ອງສາຍເພື່ອຄຸນນະພາບການຮ້ອງເພງ. ເຄື່ອງດົນຕຣີທອງເຫຼືອງສຳລັບທີມໃຫຍ່, ເຄື່ອງລົມໄມ້ສຳລັບສີສັນ, ແລະ ຄວາມແວວວາວ, ແລະເຄື່ອງເຄາະສຳລັບສະຕາຍ, ໄຫວພິບແລະຈັງຫວະ. ເຄື່ອງດົນຕຣີແຕ່ລະຊນິດ ຮັບໃຊ້ໃນຈຸດປະສົງຕາມການອອກແບບຂອງຜູ້ແຕ່ງ.

ຄຣິສຕະຈັກເປັນເໝືອນວົງດົນຕຣີ ຊິມໂຟນີອໍແຈັສຕຣາ ບ່ອນທີ່ເຮົາທຸກຄົນຫຼິ້ນນຳກັນ, ແຕ່ວ່າເຄື່ອງດົນຕຣີແຕ່ລະຊິ້ນມີສ່ວນຊ່ວຍໂດຍສະເພາະ. ບົດຮຽນນີ້ ເນັ້ນການຮັບໃຊ້ຮ່ວມກັນໃນພຣະຄຣິດ. ຂນະສະມາຊິກທຸກຄົນໃຊ້ຂອງປະທານແຕກຕ່າງກັນພວກເຮົາຮັບໃຊ້ຊຶ່ງກັນແລະກັນ ແລະ ຮັບໃຊ້ໂລກອ້ອມຮອບເຮົາ.

*ທ່ານເຄີຍເຫັນປະສົບການດ້ານດົນຕຣີທີ່ກະຕຸ້ນອາຣົມຂອງຝູງຊົນເມື່ອໃດ?*

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. ເອເຟໂຊ 4:1-7.

*1. ເຫດສັນນັ້ນຂ້າພະເຈົ້າ, ຜູ້ຖືກຈຳຈອງເພາະເຫັນແກ່ອົງພຣະຜູ້ເປັນເຈົ້າ, ຈຶ່ງວອນຂໍທ່ານທັງຫຼາຍໃຫ້ດຳເນີນຊີວິດສົມກັບທີ່ພວກ*
*ທ່ານໄດ້ຊົງເອີ້ນເອົາແລ້ວນັ້ນ. 2. ຄືຈົ່ງມີໃຈຖ່ອມລົງທຸກຢ່າງແລະໃຈອ່ອນສຸພາບ, ດ້ວຍຄວາມພຽນອົດທົນແລະຜ່ອນໜັກຜ່ອນເບົາ*
*ເຊິ່ງກັນແລະກັນດ້ວຍຄວາມຮັກ. 3 ຈົ່ງພຽນພຍາຍາມເອົາສັນຕິສຸກຜູກມັດເພື່ອຮັກສາຄວາມເປັນນໍ້າໜຶ່ງໃຈດຽວກັນ ຊຶ່ງພຣະວິນຍານ*
*ຊົງປະທານໃຫ້ນັ້ນ. 4 ມີກາຍດຽວແລະມີພຣະວິນຍານອົງດຽວ ເໝືອນມີຄວາມຫວັງໃຈອັນດຽວ ທີ່ເນື່ອງໃນການທີ່ຊົງເອີ້ນເອົາພວກ*
*ທ່ານແລ້ວນັ້ນ. 5 ມີອົງພຣະຜູ້ເປັນເຈົ້າອົງດຽວ, ມີຄວາມເຊື່ອດຽວ, ມີບັບຕິສມາອັນດຽວ. 6 ມີພຣະເຈົ້າອົງດຽວຄື ພຣະບິດາຂອງ*
*ຄົນທັງປວງ ຜູ້ຊົງສະຖິດຢູ່ເທິງຄົນທັງປວງ, ແລະທົ່ວຄົນທັງປວງ, ແລະໃນຄົນທັງປວງ. 7 ແຕ່ວ່າພຣະຄຸນນັ້ນ ຊົງໂຜດປະທານແກ່*
*ເຮົາທຸກໆຄົນ ຕາມຂອງພຣະຣາຊທານທີ່ພຣະຄຣິດໄດ້ຊົງກຳນົດໄວ້.*

ວົງດົນຕຣີ ຊິມໂຟນີ ຕ້ອງການຄວາມສາມັກຄີ. ນັ້ນຄືສິ່ງທີ່ອັຄສາວົກໂປໂລກ່າວໄວ້ຢ່າງຊັດເຈນໃນ ເອເຟໂຊ 4:1-7. ເຄິ່ງທີໜຶ່ງຂອງຈົດໝາຍເອເຟໂຊແມ່ນກ່ຽວກັບຫຼັກຄຳສອນ, ສິ່ງທີ່ຄຣິສຕະຈັກເຊື່ອ. ເລີ່ມແຕ່ບົດທີ 4, ການເນັ້ນ, ຈະມຸ່ງໄປສູ່ການສອນເຊີງປະ

ຕິບັດກ່ຽວກັບວິທີການເຊື່ອໃນຄວາມເຊື່ອຂອງເຮົາ. ທ່ານໂປໂລຊຽນຈາກທີ່ຄຸມຂັງໂຣມັນກະຕຸ້ນໃຫ້ຜູ້ອ່ານໃຊ້ຊີວິດຢ່າງມີຄ່າຫຼືການຮຽກເອີ້ນຂອງພວກເຂົາ. ພາສາກຣີກຄຳວ່າ "ມີຄ່າ" ຖືກນຳໃຊ້ໃນການຊັ່ງຊາ, ດັ່ງດຽວກັບຊິງ. ນັ້ນແມ່ນ, ການປະພຶດຂອງຜູ້ເຊື່ອຄວນຊັ່ງຊາກັບວິຊາຊີບຖານະຜູ້ຕິດຕາມພຣະຄຣິດ. ໃນຂໍ້ 2, ໂປໂລອ້າງເຖິງບຸຄລິກຂອງຜູ້ທີ່ເດີນຢ່າງມີຄ່າໃນການຖືກເອີ້ນຂອງພວກເຂົາເຈົ້າ: **(1)** ການຖ່ອມຕົວ. **(2)** ຄວາມອ່ອນສຸພາບ. **(3)** ຄວາມພຽນອົດທົນ. **(4)** ຜ່ອນໜັກຜ່ອນເບົາຊຶ່ງກັນແລະກັນດ້ວຍຄວາມຮັກ. ໃນກຣີກບູຮານແລະວັທນາທັມຊາວໂຣມັນ, ຖ້າທ່ານເອີ້ນຜູ້ໃດຜູ້ນຶ່ງໃຫ້ "ຖ່ອມຕົວ" ຫຼື "ອ່ອນສຸພາບ," ມັນແມ່ນການດູຖູກ. ເຂົາຄິດວ່າຄົນຖ່ອມຕົວ, ອ່ອນສຸພາບສະແດງຄວາມອ່ອນແອ ແລະຂາດຄວາມເຄົາຣົບຕົວເອງ. ແຕ່ພຣະເຢຊູໄດ້ຍົກລະດັບຄຸນສົມບັດເຫຼົ່ານີ້ຂຶ້ນສູ່ຄຸນທັມໂດຍຜ່ານຕົວຢ່າງແລະຄຳສອນຂອງພຣະອົງເອງ. ຜູ້ຂຽນພຣະຄັມພີໃໝ່ກໍສອນຜູ້ເຊື່ອເຊັ່ນດຽວກັນ ໃຫ້ຮັບໃຊ້ແລະຖືວ່າຜູ້ອື່ນດີກວ່າຕົນ (ຟລປ 2:3-4). ພວກທີ່ເບິ່ງຕົວເອງດ້ວຍການຖ່ອມຕົວ ປະຕິບັດຕໍ່ຄົນອື່ນດ້ວຍຄວາມສຸພາບ, ບໍ່ໂລບເພື່ອອຳນາດແລະຕຳແໜ່ງແຕ່ສະແດງຄວາມເກງໃຈຜູ້ອື່ນ. ການອົດທົນອະທິບາຍເຖິງຜູ້ທີ່ບໍ່ແກ້ແຄ້ນເມື່ອຄົນອື່ນເຮັດຜິດໃຫ້. ການຜ່ອນໜັກຜ່ອນເບົາຊຶ່ງກັນແລະກັນໃນຄວາມຮັກແມ່ນຄ້າຍຄືກັນ. ທັງໝົດນີ້ມີສ່ວນເຮັດໃຫ້ເກີດຄວາມສາມັກຄີໃນພຣະກາຍຂອງພຣະຄຣິດ. ຄວາມເປັນນຶ່ງຄວນຖືເປັນສິ່ງສຳຄັນຕໍ່ເຮົາ ເພາະວ່າມັນເປັນສິ່ງສຳຄັນຫຼາຍຕໍ່ພຣະຄຣິດ(ໂຢຮັນ 17:20-23). ທ່ານໂປໂລໄດ້ຊຸກຍູ້ໃຫ້ຜູ້ອ່ານໃຫ້ພຍາຍາມຮັກສາຄວາມເປັນນ້ຳນຶ່ງໃຈດຽວກັນ(ອຟຊ 4:3). ພຣະຄຣິດໄດ້ຊົງສ້າງພວກເຮົາໃຫ້ເປັນອັນນຶ່ງອັນດຽວກັນ, ແຕ່ວ່າຄວາມເປັນອັນນຶ່ງອັນດຽວອາດຖືກທຳລາຍດ້ວຍບາບ ແລະດ້ວຍຄວາມເຫັນແກ່ຕົວ. ການຮັກສາຄວາມເປັນນຶ່ງໃນພຣະກາຍເປັນໜ້າທີ່ຂອງຄຣິສຕຽນທຸກຄົນ.

ຄຣິສຕະຈັກທ້ອງຖິ່ນໂດຍທົ່ວໄປປະກອບດ້ວຍຄົນຫຼາຍລຸ້ນ ແລະອາດມີເຊື້ອຊາດ ແລະວັທນາທັມທີ່ແຕກຕ່າງກັນ. ສະມາຊິກໃນຄຣິສຕະຈັກມີມຸມມອງທາງການເມືອງແລະຄວາມຄິດເຫັນທີ່ແຕກຕ່າງກັນໃນການຕີຄວາມໝາຍໃນພຣະຄັມພີ ແລະການດຳເນີນຊີວິດຄຣິສະຕຽນ. ແຕ່ສິ່ງທີ່ເຮັດໃຫ້ເຮົາເປັນນຶ່ງດຽວໃຫຍ່ກວ່າສິ່ງທີ່ແຍກເຮົາຫຼາຍ. ທ່ານໂປໂລເຕືອນຜູ້ເຊື່ອວ່າພວກເຮົາມີ:

- ກາຍອັນດຽວ: ພວກເຮົາເປັນຊຸມຊົນທີ່ມອງເຫັນໄດ້.
- ພຣະວິນຍານອົງດຽວ: ພວກເຮົາຮ່ວມພຣະວິນຍານບໍຣິສຸດອົງດຽວທີ່ສະຖິດໃນເຮົາ.
- ຄວາມຫວັງດຽວ: ຄວາມຫວັງຂອງເຮົາແມ່ນຄຳສັນຍາທີ່ເຮົາຈະໄດ້ຮ່ວມໃນພຣະຣັສມີຂອງພຣະຄຣິດຊົ່ວນິຣັນ.
- ພຣະຜູ້ເປັນເຈົ້າອົງດຽວ: ພວກເຮົານະມັສການພຣະເຢຊູຜູ້ດຽວ.
- ຄວາມເຊື່ອດຽວ: ພວກເຮົາທຸກຄົນວາງໃຈເຊື່ອພຣະເຢຊູເພື່ອຄວາມພົ້ນ.
- ບັບຕິສມາດຽວ: ໂດຍການບັບຕິສມາໃນນ້ຳ, ພວກເຮົາກໍປະກາດຄວາມເຊື່ອຂອງພວກເຮົາ.
- ຈຸດປະສົງດຽວ: ພວກເຮົາທຸກຄົນເອີ້ນພຣະເຈົ້າວ່າພຣະບິດາຂອງພວກເຮົາ.

*ການມີຄຣິສຕະຈັກທີ່ມີພັນທະກິດຫຼາກຫຼາຍມີປໂຍດແລະການທ້າທາຍຢ່າງໃດແດ່?*

## 2. ເອເຟໂຊ 4:11-13.

*11 ຂອງພຣະລາຊທານຂອງພຣະອົງກໍຄືໃຫ້ລາງຄົນເປັນອັຄສາວົກ, ລາງຄົນເປັນຜູ້ປະກາດພຣະທັມ, ລາງຄົນເປັນຜູ້ປະກາດຂ່າວປະ*
*ເສີດ, ລາງຄົນເປັນສິດຍາພິບານ ແລະອາຈານ. 12 ເພື່ອຈັດຕຽມໄພ່ພົນທັງຫຼາຍຂອງພຣະອົງ ໃຫ້ເປັນຜູ້ຮັບໃຊ້ທີ່ເໝາະສົມເພື່ອເສີມ*
*ສ້າງພຣະກາຍຂອງພຣະຄຣິດໃຫ້ຈະເຣີນຂຶ້ນ. 13 ຈົນກວ່າເຮົາທຸກຄົນຈະບັນລຸເຖິງຄວາມເປັນນ້ຳນຶ່ງໃຈດຽວກັນໃນຄວາມເຊື່ອແລະໃນ*
*ຄວາມຮູ້ເຖິງເຣື່ອງ ພຣະບຸດຂອງພຣະເຈົ້າຈົນກວ່າເຮົາຈະເປັນຄົນໃຫຍ່ເຕັມສ່ວນຄືເຕັມເຖິງຂນາດຄວາມສົມບູນຂອງພຣະຄຣິດ.*

ຜູ້ເຊື່ອທຸກຄົນໄດ້ຮັບຂອງປະທານຝ່າຍວິນຍານສຳລັບການຮັບໃຊ້ (1 ກຣທ 12:7). ແຕ່ຕ້ອງມີບາງຄົນຝຶກສະມາຊິກຄຣິສຕະຈັກໃຫ້ຮູ້ຈັກໃຊ້ຂອງປະທານເຫຼົ່ານັ້ນ. ສະນັ້ນ, ພຣະເຈົ້າຈຶ່ງໄດ້ປະທານຜູ້ນຳໃຫ້ແກ່ຄຣິສຕະຈັກ, ຜູ້ຊຶ່ງພຣະອົງໄດ້ຈັດຕຽມໄວ້ສຳລັບຝຶກແອບຄົນອື່ນໆ. ບັນຊີລາຍຊື່ຜູ້ນຳຂອງທ່ານໂປໂລ ລວມມີ ອັຄສາວົກ, ຜູ້ທຳນວາຍ, ຜູ້ປະກາດ, ສິດຍາພິບານ, ແລະ ຄຣູສອນ (ອຟຊ 4:11). ໃນເອເຟໂຊ 2:20 ຮຽກອັຄສາວົກແລະຜູ້ນຳວ່າເປັນພື້ນຖານຂອງຄຣິສຕະຈັກ. ພວກເຂົາຊ່ອຍສ້າງຕັ້ງຄຣິສຕະຈັກ.

ກ່າວຢ່າງເຄັ່ງຄັດວ່າ, ພວກອັຄສາວົກເປັນກຸ່ມຜູ້ຊາຍທີ່ໂດດເດັ່ນໃນສະຕະວັດແລກ. ພວກເຂົາແມ່ນອັຄສາວົກສິບເອັດຄົນ (ບໍ່ນັບຢູດາ), ມັດທີຢາ (ກຈກ 1:26), ບາຣະນາບາ (ກຈກ 14:14). ຢາໂກໂບນ້ອງຊາຍພຣະເຢຊູ (ຄລຕ 1:19), ຊີລາ (1 ທສນ 1:1), ອັນດາໂຣນິໂກກັບນາງຢູນີຢາ (ໂຣມ 16:7). ເພື່ອຖືກເອີ້ນວ່າ*ອັຄສາວົກ*, ຄົນຜູ້ນັ້ນຕ້ອງມີຄຸນສົມບັດພໍ. ພວກເຂົາ: **(ກ)** ໄດ້ເຫັນພຣະຄຣິດຜູ້ຄືນພຣະຊົນ. **(ຂ)** ຖືກພຣະເຢຊູສົ່ງໄປເທສນາຂ່າວປະເສີດ. **(ຄ)** ໄດ້ທໍາງານເພື່ອສ້າງອານາຈັກຂອງພຣະເຈົ້າ. **(ງ)** ໄດ້ເຮັດໝາຍສໍາຄັນ, ແປກປລາດ, ແລະ ການອັສຈັນຕ່າງໆ. _ພວກຜູ້ທໍານວາຍ_ ແມ່ນໂຄສົກເວົ້າແທນພຣະເຈົ້າ. ບາງຄັ້ງຂໍ້ຄວາມຂອງພວກເຂົາບອກລ່ວງໜ້າເຖິງອານາຄົດ. ແຕ່ສ່ວນຫຼາຍ, ພວກເຂົາໃຫ້ການຊຸກຍູ້ແລະໃຫ້ກໍາລັງໃຈ. _ພວກຜູ້ປະກາດ_ ແມ່ນຜູ້ຮັບໃຊ້ທີ່ເດີນທາງໄປແບ່ງປັນຂ່າວປະເສີດແກ່ຜູ້ທີ່ບໍ່ເຄີຍໄດ້ຍິນ. ພວກເຂົາ _ມັກ_ ກໍ່ຕັ້ງຄຣິສຕະຈັກຂຶ້ນເລື້ອຍໆໃນບ່ອນທີ່ບໍ່ທັນມີເທື່ອ. ມີການກ່າວເຖິງສິດຍາພິບານແລະຄຣູດ້ວຍກັນແລະເໝືອນຈະເປັນຕົວແທນບົດບາດດຽວກັນ. ພວກນີ້ແມ່ນຜູ້ນໍາຄຣິສຕະຈັກທ້ອງຖິ່ນ. ພວກເຂົາລ້ຽງຝູງແກະ, ຈັດການເລື່ອງການບໍຣິຫານ, ໃຫ້ຄໍາປຶກສາ, ແລະ ອົບຮົມສະມາຊິກໂບດ. ຂໍ້12-13 ບອກພວກເຮົາເຖິງເຫດໃດພຣະເຈົ້າຈຶ່ງປະທານຜູ້ນໍາເຫຼົ່ານີ້ໃຫ້ແກ່ໂບດ. ບໍ່ໃຊ່ເພື່ອໃຫ້ພວກເຂົາສາມາດປະຕິບັດພັນທະກິດທັງໝົດຂອງຄຣິສຕະຈັກໄດ້. ແຕ່ເພື່ອໃຫ້ພວກເຂົາສາມາດຝຶກອົບຮົມຄຣິສຕະຈັກເພື່ອການຮັບໃຊ້. ຄໍາວ່າ "ຝຶກອົບຮົມ" ("ຈັດຕຽມ," ຂໍ້ 12) ໝາຍຄວາມວ່າ "ເພື່ອຈັດໃຫ້ຖືກຕ້ອງ" (to put right) ຄືກັນກັບດາມກະດູກຫັກ. ບ່ອນອື່ນໆໃນພຣະຄັມພີໃໝ່, ຄໍານີ້ໃຊ້ເພື່ອອ້າງເຖິງການຝູງມອງ (ມທ 4:21) ຫຼື ການຟື້ນຟູຜູ້ເຊື່ອທີ່ຕິດບ້ວງແຮ້ວຄວາມບາບ (ຄລຕ 6:1). ຈຸດປະສົງຂອງການຝຶກອົບຮົມແມ່ນຫຍັງ? ແມ່ນການຕຽມສະມາຊິກຄຣິສຕະຈັກໃຫ້ເຮັດພັນທະກິດເພື່ອສ້າງພຣະກາຍພຣະຄຣິດຂຶ້ນ. ພຣະເຢຊູໄດ້ມອບໝາຍໂຄງການອັນຍິ່ງໃຫຍ່ໃນການສ້າງສາວົກຂອງຄົນທຸກຊາດໃຫ້ແກ່ຄຣິສຕະຈັກຂອງພຣະອົງ (ມທ 28:18-20). ຜູ້ນໍາຄຣິສຕະຈັກຝຶກອົບຮົມສະມາຊິກໃນການຮັບໃຊ້ເພື່ອເສີມສ້າງພຣະກາຍພຣະຄຣິດ. ເມື່ອຜູ້ຮັບໃຊ້ຂອງໂບດ, ບໍ່ໄດ້ສ້າງພຽງແຕ່ດ້ານປະລິມານ ແຕ່ໃນດ້ານກໍາລັງນໍາ. ໜ້າທີ່ຂອງພວກເຮົາຄື "ສ້າງສາວົກ" (ມທ 28:19) ມັນຍິ່ງກວ່າການເອົາຊນະວິນຍານເທົ່ານັ້ນ. ມັນແມ່ນການລ້ຽງດູຜູ້ເຊື່ອໃຫ້ເຕີບໃຫຍ່. ທ່ານໂປໂລວັດແທກເປົ້າໝາຍຂອງການເຕີບໃຫຍ່ນັ້ນໃນສອງທາງ:

1. "ການເປັນນຶ່ງດຽວໃນຄວາມເຊື່ອແລະໃນຄວາມຮູ້ຂອງພຣະບຸດພຣະເຈົ້າ."
2. "ການເຕີບໃຫຍ່ຂຶ້ນວັດແທກໂດຍຄວາມເຕັມບໍຣິບູນຂອງພຣະຄຣິດ."

*ມີທາງໃດແດ່ທີ່ໂບດຂອງເຮົາພັທນາແລະຈັດຕຽມຄົນຂອງເຮົາສໍາລັບພັນທະກິດ?*

### 3. ເອເຟໂຊ 4:14-16.

*14 ເພື່ອພວກເຮົາຈະບໍ່ໄດ້ເປັນເດັກນ້ອຍອີກຕໍ່ໄປ ຖືກພັດໄປພັດມາ ແລະຫັນເຫໄປມາດ້ວຍລົມປາກຂອງຄໍາສັ່ງສອນທຸກຢ່າງ ແລະດ້ວຍເລ້ກົນຂອງມະນຸດທີ່ຫຼອກລວງໃຫ້ຫຼົງຕາມອຸບາຍອັນສລາດຂອງເຂົາ. 15 ແຕ່ໃຫ້ພວກເຮົາຍຶດເອົາຄວາມຈິງດ້ວຍໃຈຮັກ ເພື່ອຈະຈະເລີນຂຶ້ນທຸກຢ່າງຈົນເຖິງພຣະອົງຜູ້ເປັນສີສະ ຄືພຣະຄຣິດ. 16 ເນື່ອງຈາກພຣະອົງນັ້ນຮ່າງກາຍທັງສິ້ນທີ່ຕິດຕໍ່ສນິດແລະຜູກພັນກັນໂດຍທຸກໆຂໍ້ຕໍ່ ທີ່ຊົງປະທານ ຈຶ່ງໄດ້ຈະເຣີນໃຫຍ່ຂຶ້ນດ້ວຍຄວາມຮັກ ເມື່ອອະວັຍວະທຸກສ່ວນເຮັດໜ້າທີ່ຕາມຄວາມເໝາະສົມແລ້ວ.*

ໃນການຮຽນຂອງອາທິດກ່ອນເຣື່ອງການເຕີບໃຫຍ່ໃນພຣະຄຣິດ, ພວກເຮົາໄດ້ສົນທະນາເຣື່ອງການເຕີບໃຫຍ່ຝ່າຍວິນຍານທີ່ຫຼີກບໍ່ໄດ້. ໃນພາກນີ້, ທ່ານໂປໂລໄດ້ອະທິບາຍຕື່ມ. ເພິ່ນໄດ້ເລີ່ມດ້ວຍການຊີ້ໃຫ້ເຫັນວ່າການເຕີບໃຫຍ່ຝ່າຍວິນຍານມີຫຍັງທີ່_ບໍ່ແມ່ນ._ ການເຕີບໃຫຍ່ຝ່າຍວິນຍານບໍ່ເໝືອນເດັກນ້ອຍຜູ້ທີ່ເຊື່ອຄໍາສອນທຸກຢ່າງທີ່ເຂົາໄດ້ຍິນແລະຫຼົງທາງໄດ້ງ່າຍ. ເດັກນ້ອຍໜ້າຮັກ, ແຕ່ພວກເຂົາໄຮ້ດຽງສາຢ່າງບໍ່ໜ້າເຊື່ອ. ເດັກນ້ອຍຫຼາຍຄົນກໍບໍ່ມີປັນຍາທີ່ມາພ້ອມກັບການເປັນຜູ້ໃຫຍ່, ຊຶ່ງເຮັດໃຫ້ເຮົາແຍກແຍະຄວາມຈິງອອກຈາກຄວາມບໍ່ຈິງໄດ້. ເບິ່ງຄືວ່າອັຄສາວົກໂປໂລຕໍ່ສູ້ກັບຄູສອນປອມຢູ່ຕລອດເວລາບໍ່ທາງໃດກໍທາງນຶ່ງ. ເພິ່ນຖືວ່າສິ່ງເຫຼົ່ານີ້ເປັນພັຍຄຸກຄາມຢ່າງແທ້ຈິງຕໍ່ສຸຂພາບຂອງຄຣິສຕະຈັກຍຸກແລກ ແລະປະສິດທິພາບຂອງພັນທະກິດ. ພິຈາຣະນາຄໍາອໍາລາຂອງເພິ່ນຕໍ່ພວກເຖົ້າແກ່ຂອງຄຣິສຕະຈັກເມືອງເອເຟໂຊໃນ ກຈກ 20:17-35, ແລະໂດຍສະເພາະຂໍ້ 28-31ວ່າ: "*28 ທ່ານທັງຫຼາຍຈົ່ງລະວັງຕົວເອງໃຫ້*

*ດີແລະລະວັງຮັກສາຝູງແກະທີ່ພຣະວິນຍານບໍລິສຸດ ໄດ້ຊົງຕັ້ງພວກທ່ານໄວ້ໃຫ້ເປັນຜູ້ດູແລເພື່ອບໍາລຸງລ້ຽງຄຣິສຕະຈັກຂອງພຣະເຈົ້າທີ່*
*ພຣະອົງຊົງໄຖ່ມາດ້ວຍພຣະໂລຫິດຂອງພຣະອົງເອງ.*✝ ***29*** *ເຮົາຮູ້ຢູ່ວ່າເມື່ອເຮົາຈາກໄປແລ້ວ ຈະມີໝາໃນຕົວຮ້າຍເຂົ້າມາໃນຖ້າມກາງ*
*ພວກທ່ານມັນຈະບໍ່ເວັ້ນຊີວິດຂອງຝູງແກະ.* ***30*** *ຈະມີຊາຍລາງຄົນເກີດມາຈາກພວກທ່ານເອງກ່າວປີ້ນຄວາມຈິງ ເພື່ອຊັກຊວນພວກ*
*ສິດໃຫ້ຫຼົງຕາມເຂົາໄປ.* ***31*** *ເຫດສັນນັ້ນຈົ່ງເຝົ້າລະວັງ ແລະຈື່ຈໍາໄວ້ວ່າ ໃນລະຫວ່າງສາມປີທັງກາງເວັນແລະກາງຄືນເຮົາບໍ່ໄດ້ຢຸດ*
*ຢ່ອນໃນການເຕືອນສະຕິທ່ານທຸກຄົນດ້ວຍນໍ້າຕາໄຫຼ."* <u>ພັຍອັນຕລາຍຈາກການຄວ້າເອົາຄໍາສອນປອມແມ່ນຫຼາຍກວ່າຄວາມຮູ້ຢ່າງຜິດ</u>
<u>ພາດ.</u> <u>ສິ່ງທີ່ເຮົາເຊື່ອສິ່ງຜົນສະທ້ອນຕໍ່ການດໍາເນີນຊີວິດຂອງເຮົາ</u>. ການເຕີບໃຫຍ່ຂຶ້ນໃຫ້ຄວາມໝັ້ນຄົງໃນການເຂົ້າໃຈຄວາມຈິງແລະ ດໍາເນີນຊີວິດຕາມນັ້ນຢ່າງຕໍ່ເນື່ອງ. ໃນທາງກົງກັນຂ້າມກັບຕໍ່ກຸ່ມທີ່ບໍ່ໃຫຍ່ຝ່າຍວິນຍານ, ຖືກຫຼອກລວງໂດຍທຸກໆແນວຄວາມຄິດໃໝ່ໆ ທີ່ພວກເຂົາໄດ້ຍິນ, ພວກທີ່ເຊື່ອທີ່ໃຫຍ່ຖ້ອນແລ້ວຈະເວົ້າຄວາມຈິງແລະຮັບເອົາມັນເພື່ອການເຕີບໂຕເປັນຜູ້ໃຫຍ່ຂອງພວກເຂົາຮ່ວມກັນ. ພວກເຂົາສັ່ງສອນຊຶ່ງກັນແລະກັນ. ພວກເຂົາໃຫ້ກໍາລັງໃຈແລະຝຶກຝົນເພື່ອນຮ່ວມຄວາມເຊື່ອໃຫ້ແຫຼມຄົມຂຶ້ນ. "ການເວົ້າຄວາມຈິງໃນ ຄວາມຮັກ" ສາມາດແປຕາມຕົວວ່າ "ຄວາມຈິງໃນຄວາມຮັກ." ຄຸນສົມບັດ, "ໃນຄວາມຮັກ," ເປັນສິ່ງສໍາຄັນ. ນີ້ບໍ່ແມ່ນການແກ້ໄຂໃຫ້ ຖືກຕ້ອງເພື່ອການພິສູດວ່າ, "ຂ້ອຍຖືກແລະເຈົ້າຜິດ." ເປັນການເວົ້າຄວາມຈິງດ້ວຍຄວາມກະຣຸນາໂດຍໄດ້ຮັບແຮງບັນດານໃຈຈາກຜູ້ ຟັງໃຫ້ເກີດປໂຍດສູງສຸດ. ແຮງບັນດານໃຈເປັນກຸນແຈ, ເພາະວ່າພຣະຄັມພີກໍສອນຜູ້ເຊື່ອບໍ່ໃຫ້ນິນທາກັນຫຼືຕັດສິນກັນດ້ວຍ (ຍາໂກໂບ 4:11-12).

*ເມື່ອໃດມີຄົນເວົ້າຄວາມຈິງໃນຄວາມຮັກຊ່ອຍທ່ານເຕີບໂຕໃຫ້ເປັນຜູ້ໃຫຍ່ໃນຖານະຄຣິສຕຽນ?*

ໃນເອເຟໂຊ 4:16, ທ່ານໂປໂລໄດ້ອະທິບາຍຄຣິສຕະຈັກທີ່ເຕີບໂຕ, ເຂັ້ມແຂງ. ສະມາຊິກມີຄວາມຜູກພັນກັນໃນພຣະຄຣິດ. ຜູ້ເຊື່ອ ເຕີບໃຫຍ່ຂຶ້ນພ້ອມກັນແລະເສີມສ້າງພຣະກາຍຂຶ້ນ. ໂປໂລໄດ້ໃຫ້ບາງຕົວຢ່າງຂອງປະທານໃນ ໂຣມ ບົດ12 ແລະ 1 ກຣທ ບົດ 12-14. ອີກເທື່ອນຶ່ງ, ຄຣິສຕະຈັກເປັນເໝືອນ ຊິມໂຟນີອໍແຄສຕຣາ. ມັນເຮັດວຽກຮ່ວມກັນເພື່ອຖວາຍກຽດພຣະຄຣິດແລະເຮັດໃຫ້ພັນທະ ກິດຂອງພຣະອົງສໍາເຣັດ, ກໍຕໍ່ເມື່ອສະມາຊິກແຕ່ລະຄົນເຮັດໜ້າທີ່ຂອງຕົນເອງ ແລະເຮັດວຽກຄຽງບ່າຄຽງໄຫຼ່ກັນເທົ່ານັ້ນ.

*ມີທາງໃດແດ່ກຸ່ມຂອງເຮົາໃຊ້ຂອງປະທານຮັບໃຊ້ຄຽງຂ້າງກັນແລະກັນ?*

## ນໍາໃຊ້ໃນຊີວິດ

ເຮົາຕ້ອງຮັບໃຊ້ຊຶ່ງກັນແລະກັນແລະຢູ່ຄຽງຂ້າງກັນ. ຈົ່ງເລືອກນຶ່ງຂອງການນໍາໃຊ້ໃນຊີວິດຕໍ່ລົງໄປນີ້:

- **ປູກຝັງຄວາມສາມະຄີກັນ:** ອະທິຖານເພື່ອຄວາມເປັນນຶ່ງໃນໂບດຂອງທ່ານ. ຈົ່ງກັບໃຈຈາກການກະທໍາແລະການປະພຶດທີ່ທໍາລາຍ ຄວາມເປັນນຶ່ງ. ສາຣະພາບສິ່ງເຫຼົ່ານີ້ຕໍ່ຄົນອື່ນຖ້າເໝາະສົມ.
- **ຈົ່ງອູ້ມຊູຜູ້ນໍາໂບດ.** ຈົ່ງເຂົ້າຮ່ວມໂອກາດທີ່ຜູ້ນໍາໂບດຂອງທ່ານຈັດໃຫ້ມີການອົບຮົມແລະຈັດຕຽມສະມາຊິກ(ຮຣ 13:17). ຈົ່ງເຊື້ອ ເຊີນສະມາຊິກກຸ່ມອື່ນເຂົ້າອົບຮົມນໍາທ່ານ.
- **ມີສ່ວນຮ່ວມໃນການຮັບໃຊ້.** ຈົ່ງປະເມີນຂອງປະທານຝ່າຍວິນຍານຂອງທ່ານ. ມຸ່ງໝັ້ນເຮັດພັນທະກິດໃນໜ້າທີ່ ທີ່ທ່ານບໍ່ເຄີຍເຮັດ ມາກ່ອນ. ທູນຂໍໃຫ້ພຣະເຈົ້າຊ່ອຍທ່ານພົບບ່ອນທີ່ພຣະອົງຈັດຕຽມໃຫ້ທ່ານ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**